ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 35 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 15.02.2019.

# ດຳລັດ
## ວ່າດ້ວຍການສ້າງຕັ້ງອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ

- ອີງຕາມກົດໝາຍວ່າດ້ວຍ ລັດຖະບານ (ສະບັບປັບປຸງ) ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມກົດໝາຍວ່າດ້ວຍ ປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມດຳລັດວ່າດ້ວຍ ປ່າສະຫງວນ ສະບັບເລກທີ 134/ລບ, ລົງວັນທີ 13 ພຶດສະພາ 2015;
- ອີງຕາມໜັງສືສະເໜີ ສະບັບເລກທີ 0029/ກປ, ລົງວັນທີ 15 ມັງກອນ 2019 ຂອງກະຊວງກະສິກຳ ແລະ ປ່າໄມ້.

## ນາຍົກລັດຖະມົນຕີ ອອກດຳລັດ:

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ວາງອອກ ເພື່ອປະກາດສ້າງຕັ້ງ ອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ແນໃສ່ ຄຸ້ມຄອງ, ປົກປັກຮັກສາສິ່ງແວດລ້ອມ, ປ່າໄມ້, ຊັບພະຍາກອນປ່າໄມ້, ພັນສັດນ້ຳ-ສັດປ່າ ແລະ ແຫຼ່ງກຳເນີດຂອງຕົ້ນນ້ຳລຳທານ, ອະນຸລັກຮັກສາໄວ້ຄວາມສວຍສົດງົດງາມຂອງທິວທັດທຳມະຊາດ, ຮ່ອງຮອຍປະຫວັດສາດ, ວັດທະນະທຳ, ເປັນບ່ອນພັກຜ່ອນ, ທ່ອງທ່ຽວ ແລະ ສຶກສາຄົ້ນຄວ້າທາງດ້ານວິທະຍາສາດ ປະກອບສ່ວນເຂົ້າໃນການປັບປຸງຊີວິດການເປັນຢູ່ ຂອງປະຊາຊົນ ແລະ ພັດທະນາເສດຖະກິດ-ສັງຄົມ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ທີ່ຕັ້ງ, ຂອບເຂດ ແລະ ເນື້ອທີ່ ອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ**

ອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ຕັ້ງຢູ່ແຂວງຫົວພັນ ກວມເອົາ 5 ເມືອງ ຄື: ເມືອງແອດ, ເມືອງຮ້ຽມ, ເມືອງຫົວເມືອງ, ເມືອງຊຳເໜືອ ແລະ ເມືອງຊ່ອນ; ແຂວງຫຼວງພະບາງ ກວມເອົາ 4 ເມືອງ ຄື: ເມືອງປາກແຊງ, ເມືອງໂພນທອງ, ເມືອງໂພນໄຊ, ເມືອງວຽງຄຳ ແລະ ແຂວງຊຽງຂວາງ ຄື: ເມືອງພູກູດ ຊຶ່ງຢູ່ໃນລະຫວ່າງເສັ້ນແວງ ແລະ ເສັ້ນ ຂະໜານ ດັ່ງນີ້:

| | | ຈຸດໜຶ່ງ | ຈຸດສອງ |
|---|---|---|---|
| ທິດເໜືອ | ເສັ້ນແວງ | 103°46'09" | 103°29'17" |
| | ເສັ້ນຂະໜານ | 20°82'54" | 20°83'49" |
| ທິດຕາເວັນອອກ | ເສັ້ນແວງ | 103°87'52" | 103°82'10" |
| | ເສັ້ນຂະໜານ | 20°66'75" | 20°39'88" |
| ທິດໃຕ້ | ເສັ້ນແວງ | 103°13'09" | 103°03'09" |
| | ເສັ້ນຂະໜານ | 19°83'43" | 19°88'56" |

| | | | |
|---|---|---|---|
| ທິດຕາເວັນຕົກ | ເສັ້ນແວງ | 103°10'27" | 103°01'81" |
| | ເສັ້ນຂະໜານ | 20°32'27" | 20°00'46" |

ຂອບເຂດອຸທິຍານແຫ່ງຊາດ ນໍ້າແອດ-ພູເລີຍ ໃຫ້ອີງໃສ່ແຜນທີ່ພູມມີປະເທດ ມາດຕາສ່ວນ 1:100.000 ໂດຍຖືເອົາເສັ້ນຂະໜານ ແລະ ເສັ້ນແວງ ເປັນຫຼັກລົມທຽບໃສ່ກັບພື້ນທີ່ຕົວຈິງ ເຊັ່ນ: ສັນພູ (ສັນປັນນໍ້າ), ສາຍ ຫ້ວຍ, ແມ່ນໍ້າ, ເສັ້ນທາງ ເປັນຂີດໝາຍ ເພື່ອໃຫ້ອົງການປົກຄອງທ້ອງຖິ່ນ ຕະຫຼອດຮອດປະຊາຊົນບັນດາເຜົ່າ ໄດ້ຮັບຮູ້ ແລະ ໃຫ້ຄວາມຮ່ວມມື ໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາເປັນຢ່າງດີ.

ອຸທິຍານແຫ່ງຊາດ ນໍ້າແອດ-ພູເລີຍ ມີເນື້ອທີ່ທັງໝົດ 410.720 ຮຕ (ສີ່ຮ້ອຍສິບພັນ ເຈັດຮ້ອຍຊາວເຮັກຕາ) ຊຶ່ງກວມເອົາແຂວງຫົວພັນ 320.772,32 ຮຕ (ສາມຮ້ອຍຊາວພັນ ເຈັດຮ້ອຍເຈັດສິບສອງ ຈຸດສາມສິບສອງ ເຮັກຕາ), ແຂວງຫຼວງພະບາງ 79.679,68 ຮຕ (ເຈັດສິບເກົ້າພັນ ຫົກຮ້ອຍເຈັດສິບເກົ້າ ຈຸດຫົກສິບແປດ ເຮັກຕາ) ແລະ ແຂວງຊຽງຂວາງ 10.268 ຮຕ (ສິບພັນ ສອງຮ້ອຍຫົກສິບແປດ ເຮັກຕາ).

ທີ່ຕັ້ງ ແລະ ເນື້ອທີ່ ຂອງອຸທິຍານແຫ່ງຊາດ ນໍ້າແອດ-ພູເລີຍ ໄດ້ສະແດງໃຫ້ເຫັນຢູ່ໃນແຜນທີ່ມາດຕາສ່ວນ 1:350.000 ທີ່ຄັດຕິດມາພ້ອມນີ້.

**ມາດຕາ 3 ການຄຸ້ມຄອງ**

ການຄຸ້ມຄອງອຸທິຍານແຫ່ງຊາດ ນໍ້າແອດ-ພູເລີຍ ມີ ຄະນະກໍາມະການບໍລິຫານ ອຸທິຍານແຫ່ງຊາດ ແລະ ກອງຄຸ້ມຄອງອຸທິຍານແຫ່ງຊາດ ນໍ້າແອດ-ພູເລີຍ.

ສໍາລັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກໍາມະການດັ່ງກ່າວ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 4 ແຫຼ່ງທຶນ**

ແຫຼ່ງທຶນທີ່ນໍາໃຊ້ເຂົ້າໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ອຸທິຍານແຫ່ງຊາດ ນໍ້າແອດ-ພູເລີຍ ມີດັ່ງນີ້:

1. ງົບປະມານຂອງລັດ;
2. ກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້;
3. ກອງທຶນປົກປັກຮັກສາສິ່ງແວດລ້ອມ;
4. ການປະກອບທຶນຂອງກິດຈະການ ຫຼື ໂຄງການທີ່ດໍາເນີນຢູ່ໃນເຂດອຸທິຍານແຫ່ງຊາດ ຫຼື ພື້ນທີ່ໃກ້ຄຽງທີ່ສົ່ງຜົນກະທົບຕໍ່ ອຸທິຍານແຫ່ງຊາດ;
5. ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຂອງລັດ, ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ;
6. ແຫຼ່ງທຶນອື່ນທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 5 ການຈັດຕັ້ງປະຕິບັດ**

ກະຊວງກະສິກໍາ ແລະ ປ່າໄມ້ ແລະ ອົງການປົກຄອງທ້ອງຖິ່ນ ເປັນຜູ້ຈັດຕັ້ງປະຕິບັດ ດໍາລັດສະບັບນີ້ຢ່າງເຂັ້ມງວດ.

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 6 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ